# ເຄັດລັບ ສູ່ ຄວາມສຳເລັດ



ຮຶບໂຮມໂດຍ: ສີສະເຫວີຍ ຈັນທະວີສັກ

# ເຄັດລັບ
# ສູ່
# ຄວາມສຳເລັດ

ຮີບໂຮມໂດຍ: ສີສະເຫວີຍ ຈັນທະວີສັກ

# ເຄັດລັບ
# ສູ່ຄວາມສຳເລັດ


- ຜູ້ຮຽບຮຽງ/ແປ: ສີສະເຫວີຍ ຈັນທະວີສັກ.
- ຜູ້ພິມຄອມພິວເຕີ/ຈັດໜ້າ: ສີສະເຫວີຍ ຈັນທະວີສັກ.
- ອອກແບບໜ້າປົກ: ເພັດຊົມພູ ຕະກຸນສັນ.
- ຈຳນວນບົດສຸພາສິດ: 900 ບົດ
- ພິມທີ່: ໂຮງພິມ ຊ້າງຄູ້ ການພິມ.
- ຂະໜາດພິມ: 14,5 x 20,5 ຊມ
- ຕາມເລກທະບຽນພິມ: 123 ພຈ 26072006
- ພິມຄັ້ງທີ່ໜຶ່ງ: ປີ ຄ.ສ. 2006
- ຈຳນວນ: 2000 ເຫລັ້ມ


- ສະຫງວນລິຂະສິດ/ສີສະເຫວີຍ ຈັນທະວີສັກ 2006


- ຈັດພິມໂດຍ: ສີສະເຫວີຍ ຈັນທະວີສັກ


- ເຮືອນເລກທີ່ 274, ໜ່ວຍ 30, ບ້ານດົງນາໂຊກໃຕ້, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ. ໂທ: 215556 (020) 5613198. Email: sisaveuyc@ yahoo. Com


ລາຄາ: 15.000 ກີບ.

# ຄຳນຳຂອງຜູ້ຮຽບໂຮມ

ເມື່ອກ່ອນ, ຂ້າພະເຈົ້າມັກຍ້ອງຍໍຕົນເອງ ແຕ່ເມື່ອໄດ້ອ່ານສຸພາສິດບົດໜຶ່ງທີ່ເວົ້າວ່າ *"ຜູ້ມັກຍ້ອງຕົນເອງ ຄືຄົນທີ່ບໍ່ມີຄຸນສົມບັດທີ່ຄວນຍ້ອງຍໍ"* ແລ້ວຂ້າພະເຈົ້າກໍພະຍາຍາມປ່ຽນແປງ ບໍ່ຍ້ອງຕົນເອງອີກ. ຍາມປະສົບບັນຫາໃນຊີວິດ ແລະ ການງານ, ເມື່ອໄດ້ອ່ານສຸພາສິດທີ່ວ່າ"*ເລກໂຈດທຸກບັ້ງ ລ້ວນມີຄຳຕອບ, ບັນຫາທຸກຢ່າງ ລ້ວນມີວິທີແກ້*" ແລ້ວຂ້າພະເຈົ້າກໍສະບາຍໃຈຂຶ້ນ ທີ່ໄດ້ຮູ້ວ່າບັນຫາຂອງຕົນເອງຍັງມີວິທີແກ້ ແລະ ມີທາງອອກຢູ່. *"ທ່ານຈະບໍ່ມີເພື່ອນຈັກຄົນເລີຍ ຖ້າຫວັງຢາກມີແຕ່ເພື່ອນທີ່ດີພ້ອມທຸກຢ່າງ"* ຄືສຸພາສິດທີ່ເຮັດໃຫ້ຂ້າພະເຈົ້າຫລຸດຜ່ອນການຕຳນິຕິຕຽນກ່າວຂວັນນິນທາຜູ້ອື່ນລົງໄດ້ຢ່າງຫລວງຫລາຍ. ນີ້ເປັນພຽງຕົວຢ່າງນ້ອຍໆອັນໜຶ່ງ ຊຶ່ງຂ້າພະເຈົ້າເຫັນວ່າເປັນປະໂຫຍດອັນໃຫຍ່ຫລວງຕໍ່ຊີວິດ, ຄອບຄົວ ແລະ ການງານຂອງຕົນ.

ຍ້ອນເຫັນໄດ້ປະໂຫຍດຄືແນວນັ້ນ, ຂ້າພະເຈົ້າຈຶ່ງໄດ້ຄັດຈ້ອນເອົາສຸພາສິດ/ຄຳຄົມຕ່າງໆ ທີ່ເຫັນວ່າເຂົ້າໃຈງ່າຍ ແລະ ເໝາະສົມກັບຄວາມຮັບຮູ້ຂອງພວກລູກໆ ເພື່ອໃຫ້ເຂົາເຈົ້າໄດ້ເກັບໄວ້ອ່ານເປັນຄະຕິເຕືອນໃຈ ແຕ່ເພື່ອນໆຈຳນວນໜຶ່ງເຫັນ ເລີຍຊຸກຍູ້ໃຫ້ຂ້າພະເຈົ້າຈັດພິມອອກເປັນເຫລັ້ມຊຶ່ງອາດຈະເປັນປະໂຫຍດ ແກ່ສັງຄົມ ແລະ ປະເທດຊາດບໍ່ຫລາຍກໍໜ້ອຍ. ເມື່ອໄດ້ຮັບການຊຸກຍູ້ ແລະ ສະໜັບສະໜູນຄືແນວນັ້ນ, ຂ້າພະເຈົ້າຈຶ່ງໄດ້ຈັດຮຽບຮຽງຄືນໃໝ່ ແລະ ຈັດພິມອອກເປັນເຫລັ້ມດັ່ງທີ່ທ່ານເຫັນຢູ່ນີ້.

ສຸພາສິດ/ຄຳຄົມ ຄືພູມປັນຍາທີ່ຜ່ານການກັ່ນກອງມາຈາກມັນສະໝອງຂອງນັກປາດບັນດິດຂອງຫລາຍຍຸກຫລາຍສະໄໝ. ການຮຽນຮູ້ຈື່ຈຳເອົາສຸພາສິດ ຈຶ່ງເປັນເໝືອນທີ່ນທາງລັດສູ່ຄັງປັນຍາອັນຍິ່ງ

ໃຫຍ່ ຊຶ່ງຈະເຮັດໃຫ້ທ່ານໄດ້ຄວາມຮູ້ ແລະ ຄວາມຄິດທີ່ດີໆອັນຫລາກຫລາຍ. ການມີຄວາມຄິດທີ່ດີ ຈະມີຄ່າເໜືອກວ່າສິ່ງມີຄ່າໃດໆເພາະ *"ທຸກຢ່າງທີ່ໄດ້ຮັບໃນຊີວິດ ແລະ ການງານ ລ້ວນແຕ່ເກີດມາຈາກຄວາມຄິດຂອງທ່ານທັງນັ້ນ".*

ຂ້າພະເຈົ້າບໍ່ໄດ້ກ່າວຊື່ ຂອງຜູ້ທີ່ໄດ້ຊື່ວ່າເປັນເຈົ້.ຂອງຄວາມຄິດເຫລົ່ານີ້ເພາະເຂົ້າໃຈວ່າ ຄວາມຄິດທີ່ດີໆທັງຫລາຍໄດ້ ພັດທະນາການມາຈາກຫລາຍຮຸ່ນຄົນເຊັ່ນຄະຕິພົດທີ່ວ່າ" ລັດຖະບານຂອງປະຊາຊົນ, ໂດຍປະຊາຊົນ, ເພື່ອປະຊາຊົນ" ຊຶ່ງເຂົ້າ ໃຈກັນທົ່ວໆໄປວ່າເປັນແນວຄວາມຄິດຂອງລິງຄອນ ແຕ່ໃນຄວາມເປັນຈິງແລ້ວ ກ່ອນໜ້ານັ້ນ ທີໂອດໍພາກເກີ ກໍໄດ້ເວົ້າ ເໝືອນກັນ ແລະ ກ່ອນໜ້ານັ້ນອີກກໍມີເວບສະເຕີ, ເຈມສ໌ ມອນໂຣ, ວິຄລິບຟ໌, ຄລີອອນ ແລະ ຍັງມີອີກຫລາຍໆຄົນທີ່ ໄດ້ເວົ້າຄ້າຍຄືກັນນີ້.

ຂ້າພະເຈົ້າຕ້ອງຍອມຮັບວ່າ ສຳນວນຄຳເວົ້າທີ່ໃຊ້ຢູ່ໃນປຶ້ມເຫລັ້ມນີ້ ມີຫລາຍອັນກໍທຳມະດາໆບໍ່ສົມເປັນສຸພາສິດ ແຕ່ການເຮັດຄືແນວນັ້ນມັນແມ່ນຄວາມຕັ້ງໃຈຂອງຂ້າພະເຈົ້າ ເພາະເປົ້າໝາຍຫລັກແມ່ນຢາກໃຫ້ຜູ້ ຄົນທົ່ວໆໄປສາມາດອ່ານໄດ້ ແລະ ເຂົ້າໃຈງ່າຍເພື່ອຈະໄດ້ນຳໄປ ໃຊ້ໃຫ້ເກີດປະໂຫຍດແກ່ຊີວິດ ແລະ ການງານຂອງເຂົາເຈົ້າເຊັ່ນຄຳວ່າ "ສັດຈະທຳ" ຂ້າພະເຈົ້າຈະປ່ຽນເປັນ "ຄວາມເປັນຈິງ" ດັ່ງນີ້ເປັນຕົ້ນ.

ປຶ້ມເຫລັ້ມນີ້ປະກອບດ້ວຍສຸພາສິດຈຳນວນ 900 ກວ່າ ບົດແຕ່ລະບົດ ໄດ້ຄັດຈ້ອນມາຈາກຫລາຍແຫລ່ງ ທັງຈາກພາສາ ລາວ, ໄທ ແລະ ອັງກິດ ແຕ່ບໍ່ໄດ້ຈັດຮຽບຮຽງເປັນໝວດເປັນໝູ່ ເພາະໃນສະບັບພາສາອັງກິດຫລາຍເຫລັ້ມ ທີ່ຂ້າພະເຈົ້າຄັດຈ້ອນມາແປກໍບໍ່ໄດ້ຈັດຮຽບຮຽງເປັນໝວດໝູ່ຄືກັນ. 60% ຂອງສຸພາສິດເຫລົ່ານີ້ (ຄັດຈ້ອນຈາກ 5,215 ບົດໃນສະບັບພາສາອັງກິດ) ແປອອກມາຈາກ

ພາສາອັງກິດ. ດັ່ງນັ້ນ, ຈຶ່ງປາສະຈາກບໍ່ໄດ້ໃນຄວາມຜິດພາດທີ່ຕິຄວາມຈາກຄວາມເຂົ້າໃຈຂອງຂ້າພະເຈົ້າ.ຄຳຕຳນິຕິຊົມຂອງທ່ານຜູ້ຮູ້ທັງຫລາຍ ຈະເປັນປະໂຫຍດໃຫ້ແກ່ການປັບປຸງແກ້ໄຂໃຫ້ດີຂຶ້ນໃນຕໍ່ໜ້າ.

ຫວັງເປັນຢ່າງຍິ່ງວ່າ ຄວາມພະຍາຍາມອັນນ້ອຍໆຂອງຂ້າພະເຈົ້ານີ້ ຈະປະກອບສ່ວນເຮັດໃຫ້ອຸທິຍານອັກສອນແຫ່ງຊາດລາວ ມີດອກໄມ້ຫລາຍຫລາກສີສັນເພີ້ມຂຶ້ນຕື່ມອີກ. ຂໍຂອບໃຈ ທ່ານ ບຸນເສີນ ແສງມະນີ, ນັກປະພັນຊີໄຣ ປີ 2005 ແລະ ທ່ານ ທອງໃບ ໂພທິສານ, ນັກກະວີ "ຊີໄຣ" ປີ 2004, ຫົວໜ້າອຳນວຍການ ແລະ ບັນນາທິການວາລະສານວັນນະສິນ ເລຂາທິການສະມາຄົມນັກປະພັນລາວ ແລະ ເພື່ອນໆຈຳນວນໜຶ່ງ ທີ່ໄດ້ກວດແກ້ ແລະ ໃຫ້ຄຳເຫັນແນະນຳທີ່ເປັນປະໂຫຍດຫລາຍຢ່າງ ໃນການຮຽບຮຽງປຶ້ມເຫລັ້ມນີ້.

ຄວາມສຸກ ທີ່ຂ້າພະເຈົ້າອາດຈະໄດ້ຮັບຈາກປຶ້ມເຫຼັ້ມນີ້ ຄືການໄດ້ຮູ້ວ່າ ທ່ານໄດ້ນຳໃຊ້ສຸພາສິດ/ ຄຳຄົມຕ່າງໆ ເປັນແນວທາງ ຫຼື ຄະຕິເຕືອນໃຈໃຫ້ແກ່ການດຳລົງຊີວິດ ແລະ ວຽກງານຂອງຕົນ. ຂໍໃຫ້ຜູ້ອ່ານທຸກໆທ່ານຈົ່ງປະສົບຄວາມສຳເລັດອັນໃໝ່ທີ່ໃຫຍ່ກວ່າເກົ່າໃນ ຊີວິດ ແລະ ການງານ.

ວຽງຈັນ, ວັນທີ 1 ສິງຫາ 2006.

ສີສະເຫວີຍ ຈັນທະວີສັກ
ໂທຣ (020) 5613198



# ບົດຄຳເຫັນ

**ທ່ານ ບຸນເສີນ ແສງມະນີ**
**ນັກປະພັນ ຊີໄຣ ( THE S.E.A WRITE AWARD) ລາງວັນວັນນະກຳສ້າງສັນສຸດຍອດແຫ່ງອາຊຽນ ປະຈຳປີ 2005.**

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງ ທີ່ໄດ້ມີສ່ວນຮ່ວມໃນການຮຽບຮຽງປຶ້ມສຸພາສິດ/ຄຳຄົມໃນຊຸດ "ເຄັດລັບ ສູ່ຄວາມສຳເລັດ" ທີ່ທ່ານ ີໃສະເຫວີຍ ຈັນກະວິສັກ ໄດ້ຄົ້ນຄວ້າຮີບໂຮມມາຈະເາຫລາຍແຫຼ່ງ, ຫລາຍພາສາ ຊຶ່ງເປັນແນວຄວາມຄິດຊັ້ນເລີດຂອງນັກຄິດ, ນັກປະພັນ, ນັກກະວີ ແລະນັກທິດສະດີທີ່ມີຊື່ສຽງຂອງໂລກທັງໃນ ອາດີດ ແລະ ປັດຈຸບັນ.

ສຸພາສິດທຸກບົ ທີ່ຂ້າພະເຈົ້າໄດ້ອ່ານໃນປຶ້ມເຫລັ້ມນີ້ ລ້ວນເປັນປະໂຫຍດ ແລະ ມີຄຸນຄ່າເປັນຢ່າງຍິ່ງ. ບາງບົດ ມີເນື້ອໃນເລິກລ້ຳພິດສະດານເຊັ່ນ " ່ມເປັນໄປບໍ່ໄດ້ ທີ່ຈະບິນໃຫ້ຄືນົກອິນຊີດ້ວຍປີກຂອງນົກກາງແກ", ແຕ່ບາງບົດ ກໍເປີດເຜີຍເຂົ້າໃຈງ່າຍເຊັ່ນ: "ຄວາມຍິ່ງໃຫຍ່ຂອງຜູ້ເປັນນາຍ ສາມາດເຫັນໄດ້ຈາກການປະພຶດຕໍ່ລູກນ້ອງ" "ການແລ່ນ ະມີປະໂຫຍດ ອັນໃດ ຖ້າຫາກແລ່ນຜິດທາງ"

"ມີເພື່ອນດີ 50 ຄົນ ຖືວ່າຍັງໜ້ອຍ, ແຕ່ສັດຕູພຽງຄົນດຽວຫລາຍໂພດ" ແລະ ອື່ນໆ ຊຶ່ງທ່ານຈະໄດ້ອ່ານພົບໃນໜັງສືເຫລັ້ມນີ້.

ມະນຸດໃນໂລກນີ້ ບໍ່ວ່າຈະເປັນຊາດ, ສາສະໜາ, ພາສາ, ສັງຄົມ ແລະ ລະບອບການເມືອງໃດກໍຕາມ ລ້ວນມີສຸພາສິດສຳລັບສັ່ງສອນ ແລະ ເຕືອນສະຕິຂອງຜູ້ຄົນຢູ່ໃນສັງຄົມຂອງຕົນ. ດັ່ງນັ້ນ, ສຸພາສິດຈຶ່ງເປັນເໝືອນປັດຊະຍາ, ເປັນຄາຖາ, ເປັນຄຳພີ, ເປັນອາວຸດທີ່ແຫລມຄົມ ແລະ ເປັນກຸນແຈໄຂປີດສະໜາສູ່ຄວາມສຳເລັດໃນຊີວິດ ແລະ ການງານໄດ້ຢ່າງມີປະສິດທິຜົນ. ແນ່ນອນ, ສຸພາສິດບາງບົດຢູ່ໃນປື້ມເຫລັ້ມນີ້ ອາດຈະສວນທາງກັບແນວຄວາມຄິດຂອງບາງທ່ານ ແຕ່ກໍຕ້ອງຮັບຮູ້ນຳກັນວ່າ ສຸພາສິດທຸກບົດ ລ້ວນແຕ່ມີຄຸນຄ່າສະເພາະຕົວຂອງມັນ ຖ້າຫາກຮູ້ນຳໃຊ້ມັນໄປໃນທາງທີ່ເປັນປະໂຫຍດ.

ໃນນາມສ່ວນຕົວ, ຂ້າພະເຈົ້າຂໍຊົມເຊີຍທ່ານ ສີສະເຫວີຍ ຈັນທະວິສັກ ທີ່ໄດ້ທຸ້ມເທເຫື່ອແຮງ, ສະຕິປັນຍາ ແລະ ເວລາ ໃນການຄົ້ນຄວ້າຮີບໂຮມ ແລະຈັດພິມສຸພາສິດຊຸດ "ເຄັດລັບ ສູ່ຄວາມສຳເລັດ" ເຫລັ້ມນີ້ອອກສູ່ສາຍຕາທ່ານຜູ້ອ່ານ. ຂໍອວຍພອນແດ່ທ່ານ ສີສະເຫວີຍ ຈັນທະວິສັກ ຈົ່ງປະສົບຄວາມສຳເລັດຕາມຄວາມມຸ້ງມາດປາຖະໜາທຸກປະການ.

ນະຄອນຫລວງວຽງຈັນ ວັນທີ 1 ສິງຫາ 2006



# ບົດຄຳເຫັນ

**ທ່ານທອງໃບ ໂພທິສານ**
**ນັກກະວີ ຊີໄຣ (THE S.E.A WRITE AWARD) ລາງວັນວັນນະກຳສ້າງສັນສຸດຍອດແຫ່ງອາຊຽນ ປະຈຳປີ 2004, ຫົວໜ້າອຳນວຍການ ແລະ ບັນນາທິການວາລະສານວັນນະສິນ, ເລຂາທິການ ສະມາຄົມນັກປະພັນລາວ.**

ປື້ມ "ເຄັດລັບ ສູ່ຄວາມສຳເລັດ" ຂອງ ທ່ານ ອາຈານ ສີສະເຫວີຍ ຈັນທະວີສັກ ເຫລັ້ມນີ້ ໄດ້ບັນຈຸເອົາຄວາມຮູ້ພູມປັນຍາຂອງນັກປາດບັນດິດຈາກທົ່ວໂລກ ຜູ້ທີ່ໄດ້ຄົ້ນຄິດຄຳເວົ້າອັນຊົງຄຸນຄ່າ ແລະ ເຕັມໄປດ້ວຍພະລັງສ້າງສັນອັນສັກສິດ ສຳລັບການດຳລົງຊີວິດ ແລະ ການບຳເພັນຕົນໄປສູ່ເສັ້ນທາງແຫ່ງຄວາມສຸກ, ຄວາມສຳເລັດ ແລະ ຄວາມກ້າວໜ້າ ທັງໃນຊີວິດສ່ວນຕົວ ແລະ ການງານ ຕະຫລອດຮອດການບໍລິຫານຄອບຄົວເຮືອນຊານ ກໍຄືບ້ານເມືອງ ໃຫ້ມີຄວາມສະຫງົບຮົ່ມເຢັນ, ຍຸດຕິທຳ ແລະ ຈະເລີນຮຸ່ງເຮືອງ.

ຄົນດີ ຍ່ອມມີຄວາມຄິດດີ ແລະ ຈະນຳໄປສູ່ການກະທຳທີ່ດີດ້ວຍການເສຍສະຫລະ ແລະ ອຸທິດຕົນເພື່ອສັງຄົມສ່ວນລວມ ດັ່ງຜົນງານທີ່ທ່ານ ອາຈານ ສີສະເຫວີຍ ຈັນທະວີສັກ ໄດ້ພາກພຽນພະຍາຍາມ

ຄົ້ນຄວ້າຮຽບຮຽງບັນດາຄະຕິຄຳຄົມທີ່ມີຄ່າຈາກທົ່ວທຸກມຸມໂລກ ມາຈັດພິມເປັນປຶ້ມໃຫ້ທຸກຄົນໄດ້ອ່ານ ແລະ ຮຽນຮູ້ ຊຶ່ງນັບເປັນການປະກອບສ້າງຄັງສາງແຫ່ງຄວາມຮູ້ ແລະ ພູມປັນຍາອັນລ້ຳເລີດປະເສີດຄ່າທີ່ຫາໄດ້ຍາກ.

ໃນນາມສ່ວນຕົວ ແລະ ໃນນາມສະມາຄົມນັກປະພັນລາວ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ທ່ານ ອາຈານ ສີສະເຫວີຍ ທີ່ໄດ້ສ້າງສັນປຶ້ມເຫລັ້ມນີ້ຂຶ້ນມາຈົນສຳເລັດ. ເປົ້າໝາຍຂອງປຶ້ມເຫລັ້ມນີ້ ບໍ່ແມ່ນພຽງເພື່ອອ່ານ ແລະ ເຂົ້າໃຈເທົ່ານັ້ນ,ແຕ່ການນຳໄປປະຕິບັດໃຫ້ເກີດປະໂຫຍດແກ່ຊີວິດແລະການງານຕ່າງຫາກ ຄືເປົ້າໝາຍສູງສຸດຂອງມັນ.

ຢາກເຫັນຄຸນຄ່າລົ້ນ ໃຫ້ໄຂຂອດປິດສະໜາ
ເຜີຍບັນຫາຄຳຄົມ ຄ່າເຄັມຄູນຊ້ອນ
ເປັນຄະຕິສອນໃຫ້ ເຕືອນໃຈໃຫ້ຄິດຮ່ຳ
ຜົນຈາກການກະທຳ ສຳເລັດຜົນຊິຊ່ວຍໃຫ້
ຊີວິດເຈົ້າຢູ່ກະເສີມທ່ານເອີຍ.

ຂ້າພະເຈົ້າເຊື່ອໝັ້ນວ່າ ທຸກຄຳເວົ້າອັກສອນທີ່ສະທ້ອນໃຫ້ເຫັນສັດຈະທຳຢູ່ໃນປຶ້ມເຫລັ້ມນີ້ ຈະໄດ້ຮັບການຖ່າຍທອດເຂົ້າສູ່ຊີວິດຈິດໃຈຂອງຜູ້ອ່ານທຸກທ່ານຢ່າງເປັນອະມະຕະນິລັນດອນ.

ນະຄອນຫລວງວຽງຈັນ, ວັນທີ 1 ສິງຫາ 2006.

# ເຄັດລັບ
# ສູ່
# ຄວາມສຳເລັດ

## ສັງລວມ
## ສຸພາສິດ/ຄະຕິເຕືອນໃຈ

ຮີບໂຮມໂດຍ: ສີສະເຫວີຍ ຈັນທະວີສັກ

ໃຫ້ປາແກ່ລູກ ເຂົາຈະໄດ້ກິນປາແຕ່ມື້ນີ້, ສອນວິທີຫາປາໃຫ້ລູກ ເຂົາຈະມີປາກິນຕະຫລອດໄປ.

---

- ສຸພາສິດ ຄືພູມປັນຍາທີ່ຜ່ານການກັ່ນກອງມາຈາກມັນສະໝອງ ຊັ້ນເລີດຂອງນັກປາດບັນດິດຈາກຫລາຍຍຸກຫລາຍສະໄໝ. ການ ຮຽນຮູ້ຈື່ຈຳເອົາສຸພາສິດຕ່າງໆ ຈຶ່ງເປັນເໝືອນທີນທາງລັດສູ່ຄັງ ປັນຍາອັນຍິ່ງໃຫຍ່.

- ຄວາມຄິດທີ່ດີໆ ຖ້າບໍ່ຈົດກ່າຍໄວ້ ມັນຈະຍືນຍົງຢູ່ນຳພວກເຮົາບໍ່ ໄດ້. ການທ້ອນໂຮມເອົາແນວຄິດອັນປະເສີດເລີດລ້ຳໄວ້ ຈຶ່ງຖື ເປັນຊັບສົມບັດອັນລ້ຳຄ່າຂອງມະນຸດຊາດ.

- ອະນາຄົດຂອງປະເທດໜຶ່ງຈະເປັນແນວໃດ ສາມາດເຫັນໄດ້ຈາກ ປະຊາກອນຂອງປະເທດນັ້ນ ມັກອ່ານໜັງສືໜ້ອຍ ຫລື ຫລາຍ ສ່ຳໃດ.

- ເຮົາສາມາດຕັດສິນຄົນໄດ້ຈາກວິທີການປາກເວົ້າຂອງເຂົາຄື: ຄົນ ໂງ່ ມັກອວດສະຫລາດ, ຄົນທຸກ ມັກອວດຮັ່ງ ແລະ ຄົນຂີ້ຢ້ານ ມັກອວດກ້າ.

- ສຸດຍອດສິລະປະຂອງການປາກເວົ້າສົນທະນາກໍຄື: ຢ່າເວົ້າ ສິ່ງ ທີ່ເຮົາຢາກເວົ້າ ຈົ່ງເວົ້າສິ່ງທີ່ຄົນອື່ນຢາກຟັງ.

- ຈົ່ງເຮັດໃຫ້ທຸກວັນເປັນວັນທີ່ມີຄວາມສຸກ. ຖ້າບໍ່ດັ່ງນັ້ນ, ທ່ານຈະ ເສຍໃຈ ເພາະບໍ່ມີໃຜຮູ້ແນ່ວ່າຈະມີມື້ອື່ນສຳລັບຕົນເອງຫຼືບໍ່.

ງົວຄວາຍທີ່ຕາຍໄປ ຍັງໃຫ້ຊີ້ນ ແລະ ໜັງເປັນອາຫານ, ແຕ່ຄົນເຮົາເມື່ອຕາຍໄປແລ້ວ ຖ້າບໍ່ມີອັນໃດເຫລືອໄວ້ເປັນຄຸນປະໂຫຍດໃຫ້ແກ່ສັງຄົມ ຈະມີຄ່າໜ້ອຍກວ່າງົວຄວາຍຊໍ້າອີກ.

- ຖ້າເບິ່ງແຕ່ແນວບໍ່ດີຂອງໝູ່ ໃຜໆ ກໍບໍ່ສາມາດເປັນໝູ່ເຮົາໄດ້ເພາະບໍ່ມີຜູ້ໃດພຽບພ້ອມທຸກຢ່າງ.

- ບໍ່ມີປະເທດທີ່ທຸກຈົນ ມີແຕ່ປະເທດທີ່ມີຄົນບໍລິຫານມັນບໍ່ເປັນ, ບໍ່ມີຄົນທີ່ທຸກຈົນ ມີແຕ່ຄົນທີ່ບໍລິຫານຊີວິດຂອງຕົນບໍ່ເປັນ.

- ກາຍ ບໍ່ເຮັດໃຫ້ຜູ້ໃດເດືອດຮ້ອນ, ວາຈາ ບໍ່ເວົ້າໃຫ້ຜູ້ໃດແຄ້ນເຄືອງ, ຈິດໃຈ ບໍ່ຂຸ້ນມົວດ້ວຍອະກຸສົນຈິດ ນີ້ຄືສະຫວັນທີ່ທຸກຄົນສ້າງເອົາເອງໄດ້.

- ກ່ອນຈະສ້າງສະຫວັນຢູ່ບ່ອນໃດ ຕ້ອງສ້າງຄົນຢູ່ບ່ອນນັ້ນໃຫ້ເປັນເທວະດາເສຍກ່ອນ. ຖ້າບໍ່ດັ່ງນັ້ນ, ສະຫວັນທີ່ສ້າງຂຶ້ນມາ ຈະກາຍເປັນສະຫວັນຮ້າງທີ່ຖືກຄົນຢູ່ບ່ອນນັ້ນທຳລາຍ.

- ລັກສະນະການນຸ່ງຖື ຄືໃບປະກາດໃບທຳອິດທີ່ຄົນອື່ນມັກໃຊ້ເປັນເຄື່ອງຕັດສິນວ່າເຮົາເປັນຄົນແນວໃດ.

- ນາຍທີ່ຮ້າຍລູກນ້ອງທີ່ບໍ່ສາມາດເຮັດຕາມທີ່ຕົນເອງສັ່ງໄດ້ຄືຜູ້ທີ່ບໍ່ຮູ້ຈັກຄິດວ່າ "ຖ້າເຂົາເກັ່ງທໍ່ກັບທ່ານ ເຂົາຈະບໍ່ມາເປັນລູກນ້ອງຂອງທ່ານ".

- ຄົນທີ່ອ່ານໜັງສືໄດ້ ແຕ່ບໍ່ອ່ານ ກໍບໍ່ຕ່າງຫຍັງກັບຄົນກືກໜັງສືເພາະທັງສອງຄົນຈະບໍ່ໄດ້ປະໂຫຍດອັນໃດເລີຍຈາກໜັງສື.

ໝູ ຕ້ອງໃຫ້ຊີ້ນ, ຄວາຍ ຕ້ອງໄຖນາ, ໝາ ບໍ່ໄດ້ເຮັດຫຍັງ ແຕ່ສະບາຍກວ່າໝູ່ ເພາະມັນຮູ້ສະແດງຄວາມຈິງຮັກພັກດີຕໍ່ເຈົ້າຂອງໄດ້ເກັ່ງກວ່າໝູ່.

---

- ຄວາມສາມາດໃນການປາກເວົ້າ ສຳຄັນຍິ່ງກວ່າປະລິນຍາບັດຈາກມະຫາວິທະຍາໄລ, ມັນເປັນຫີນທາງລັດນຳຊີວິດຂອງຄົນໄປສູ່ຄວາມໂດດເດັ່ນເໜືອຜູ້ອື່ນ.ຜູ້ໃດ ຊ່ຽວຊານໃນການປາກເວົ້າ ຜູ້ນັ້ນ ຈະມີຄຸນສົມບັດເໜືອກວ່າຄຸນສົມບັດໃດໆທັງໝົດທີ່ເຂົາເປັນເຈົ້າຂອງ.

- ຖ້າຢາກສ້າງສັດຕູ ຈົ່ງພະຍາຍາມປ່ຽນແປງຜູ້ອື່ນ.

- ຄຳເວົ້າຈິງ ເປັນຄຳເວົ້າທີ່ບໍ່ມ່ວນ, ຄຳເວົ້າມ່ວນ ຄືຄຳເວົ້າທີ່ບໍ່ຈິງ.

- ເມື່ອເຫັນນັກຮຽນບໍ່ຕັ້ງໃຈຮຽນ ຄູສອນທີ່ດີ ຈະບໍ່ຕຳນິພວກເຂົາ ແຕ່ຈະຖາມຕົນເອງວ່າ ເຮົາໄດ້ເຮັດໃຫ້ການສິດສອນຂອງເຮົາເປັນທີ່ສົນໃຈແກ່ນັກຮຽນໄດ້ດີສໍ່າໃດ.

- ຖ້າຄົນຜູ້ໜຶ່ງຫາກຊອກຢູ່ຫາກິນລ້ຽງຊີບເປັນວັນໆໄປ ບໍ່ໄດ້ທຳປະໂຫຍດອັນໃດໃຫ້ແກ່ສັງຄົມ ແລ້ວເຂົາຈະແຕກຕ່າງຫຍັງກັບງົວຕົວໜຶ່ງ ທີ່ຊອກກິນຫຍ້າຫາລ້ຽງທ້ອງເປັນວັນໆໄປເຊັ່ນດຽວກັນ.

- ບໍ່ມີທຸກໃດ ຈະເຈັບປວດເທົ່າກັບເມື່ອລຳລຶກເຖິງຕອນມີຄວາມສຸກໃນຂະນະທີ່ຕົນເອງຕົກທຸກໄດ້ຍາກ.

- ວິທີເສຍເພື່ອນໄວທີ່ສຸດກໍຄື ຈົ່ງໃຫ້ເຂົາຢືມເງິນ.

- ໃຫ້ຄວາມສຳຄັນແກ່ລູກຄ້າເໝືອນພະລາຊາ ຄືການບໍລິການທີ່ສຸດຍອດຂອງຄວາມສຸດຍອດ ເພາະນອກຈາກຈະຮັກສາລູກຄ້າຄົນນັ້ນໄວ້ໄດ້ແລ້ວ ເຂົາຍັງກາຍເປັນຜູ້ໂຄສະນາຂາຍສິນຄ້າໃຫ້ແກ່ທ່ານຕະຫລອດໄປ.

- ຄົນໂງ່ ຈະເອົາໃຈໄວ້ຢູ່ປາກ, ຄົນສະຫລາດ ຈະເອົາປາກໄວ້ຢູ່ໃຈ.

- ບຸກຄະລິກດີ ບໍ່ມີໃຜໄດ້ມາແຕ່ກຳເນີດ ລ້ວນແຕ່ໄດ້ມາຈາກການຝຶກຝົນທັງນັ້ນ. ການຮຽນຮູ້ເອົາວາດຊີງການນຸ່ງຖື, ຢືນ, ເດີນ, ນັ່ງ, ນອນ, ກິນ, ດື່ມ, ເຮັດ,ເວົ້າ,ຄິດທີ່ສະງ່າງາມຂອງຜູ້ນຳທີ່ມີຊື່ສຽງ ຈະສາມາດປັບປຸງບຸກຄະລິກຂອງພວກເຮົາໃຫ້ດີຂຶ້ນໄດ້.

- ຄົນທີ່ກຳລັງຟັງທ່ານນິນທາຢູ່ນັ້ນລະ ຈະເອົາເລື້ອງຂອງທ່ານໄປນິນທາເຊັ່ນດຽວກັນ.

- ສຸດຍອດສິລະປະການຈູງໃຈຄົນທີ່ໄດ້ຜົນທີ່ສຸດຄື ຈົ່ງເວົ້າເຖິງເລື້ອງທີ່ເຂົາຕ້ອງການ ແລະ ບອກເຂົາວ່າເຮັດແນວໃດຈຶ່ງຈະໄດ້ສິ່ງທີ່ເຂົາຕ້ອງການນັ້ນ.

- ເມື່ອຜູ້ອື່ນບໍ່ສາມາດເຮັດໄດ້ຕາມທີ່ທ່ານຕ້ອງການ ຈົ່ງຢ່າໄດ້ຕຳນິເຂົາ ເພາະແມ່ນແຕ່ຕົວທ່ານເອງກໍຍັງບໍ່ສາມາດເຮັດໃນສິ່ງທີ່ຕົນຕ້ອງການໝົດທຸກຢ່າງໄດ້.

- ຄວາມຄິດດີ/ໃໝ່ ຈະມີຜົນດີໄດ້ກໍຕໍ່ເມື່ອມັນໄດ້ໃຊ້ຖືກເວລາ.ມີແຕ່ຄົນໂງ່ເທົ່ານັ້ນ ທີ່ສັ່ນຕົ້ນໄມ້ຂະນະທີ່ໃບມັນຍັງຂຽວຢູ່.

- ຖ້າບໍ່ສາມາດເກັບຄວາມລັບໄວ້ໃດ້ດ້ວຍຕົວເອງ, ແລ້ວຈະຫວັງໃຫ້ຜູ້ອື່ນເກັບຄວາມລັບໄດ້ແນວໃດ.

ບໍ່ມີກອງປະຊຸມໃດ ທີ່ໜ້າເບື່ອໜ່າຍຫລາຍເທົ່າກັບກອງປະຊຸມທີ່ທຸກຄົນເຫັນດີເຫັນພ້ອມນຳກັນໝົດທຸກຢ່າງ.

---

- ຖ້າເດີນທາງຜິດແລ້ວ, ເຖິງຈະເດີນໄດ້ໄກປານໃດກໍໄຮ້ປະໂຫຍດ ເພາະຍິ່ງເດີນຕໍ່ໄປ ກໍຍິ່ງຜິດ.

- ຄວາມຮູ້ສຶກເປັນຄົນສຳຄັນ ເປັນອາຫານທີ່ມະນຸດທຸກຄົນຫິວໂຫຍຖ້າທ່ານໃຫ້ອາຫານຊະນິດນີ້ແກ່ຜູ້ໃດ, ເຂົາຜູ້ນັ້ນຈະເຄົາລົບຮັກ ແລະ ພ້ອມທີ່ຈະເຮັດທຸກຢ່າງເພື່ອທ່ານ.

- ຈົ່ງດຳລົງຊີວິດແຕ່ລະມື້ ເໝືອນເດີນທາງຂຶ້ນພູເຂົາ,ໝັ່ນຫລຽວເບິ່ງຈອມພູຊຶ່ງປຽບເໝືອນເປົ້າໝາຍທີ່ຈະໄປເຖິງ, ເສບສຸກກັບການຊົມທັດສະນີຍະພາບໃນແຕ່ລະຍ່ານຂອງພູເຂົາທີ່ເດີນຜ່ານ ຈະເຮັດໃຫ້ທ່ານມີຄວາມສຸກຕະຫລອດການເດີນທາງ ແທນທີ່ຈະມີຄວາມສຸກພຽງແຕ່ຕອນໄປເຖິງຈອມພູເຂົາເທົ່ານັ້ນ.

- ກ່ອນຈະຕັດສິນບັນຫາໃດກໍຕາມ, ຄວນພິຈາລະນາຫລັກການພື້ນຖານເຫລົ່ານີ້: (1) ນີ້ແມ່ນບັນຫາຫຍັງ?, (2) ອັນໃດຄືສາຍເຫດທີ່ເຮັດໃຫ້ເກີດບັນຫານີ້?(3) ມີວິທີໃດແດ່ສຳລັບແກ້ບັນຫານີ້?,(4)ວິທີແກ້ແບບໃດທີ່ເຫັນວ່າດີທີ່ສຸດ?.

- ຄົນເກັ່ງ ຈະເວົ້າວ່າ "ເຖິງຍາກ ແຕ່ກໍເຮັດໄດ້", ແຕ່ຄົນຈ້າຈະເວົ້າວ່າ "ເຮັດໄດ້ຢູ່ ແຕ່ກໍຍາກຫລາຍ". ຄົນເກັ່ງ ຈະເຫັນຄວາມຊຸ່ມຊື່ນຢູ່ໃນທຸກໆບ່ອນທີ່ແຫ້ງແລ້ງ, ຄົນຈ້າ ຈະເຫັນຄວາມແຫ້ງແລ້ງຢູ່ໃນທຸກໆບ່ອນທີ່ຊຸ່ມຊື່ນ.

- ຢ່ານຳບັນຫາໄປບອກເຈົ້ານາຍ ໂດຍທີ່ບໍ່ມີຂໍ້ສະເໜີສຳລັບແກ້ບັນຫານັ້ນ.

- ເຖິງເປັນຊາດເປັນເຊື້ອ ຖ້າບໍ່ມີຄວາມເອື້ອເຟື້ອ ກໍເໝືອນເບື້ອໃນປ່າ, ເຖິງບໍ່ແມ່ນຊາດແມ່ນເຊື້ອ ຖ້າມີຄວາມເອື້ອເຟື້ອ ກໍເໝືອນເນື້ອອາຕະມາ.

- ດອກໄມ້ຫອມ ແມ່ນຈະເກີດຢູ່ເທິງຂີ້ຕົມກໍ່ບໍ່ຖິ້ມກິ່ນ,ເພັດນິນແມ່ນຈະຝັງຢູ່ໃນທີ່ສົກກະປົກ ກໍ່ບໍ່ເສື່ອມລາຄາ, ຄົນດີ ແມ່ນຈະຢູ່ໃນຖານະ ແລະ ພາວະຢ່າງໃດ ກໍ່ບໍ່ປະຖິ້ມການທຳຄວາມດີ.

- ຜູ້ທີ່ມັກຍ້ອງຍໍຕົນເອງ ຄືຄົນທີ່ບໍ່ມີຄຸນສົມບັດຄວນຍ້ອງຍໍເລີຍ.

- ເຮັດທຸລະກິດໂດຍບໍ່ໂຄສະນາ ຈະເປັນເໝືອນຈອບເບິ່ງຜູ້ສາວຢູ່ໃນຄວາມມືດ, ທ່ານຮູ້ວ່າຕົນເອງກຳລັງເຮັດຫຍັງ ແຕ່ບໍ່ມີໃຜຮູ້ວ່າທ່ານເຮັດຫຍັງ.

- ຄຳຍ້ອງຍໍ ເປັນສິ່ງທີ່ມະນຸດທຸກຄົນປາຖະໜາ ແຕ່ຜູ້ທີ່ຈະໄດ້ມັນຄືຜູ້ບໍ່ຍ້ອງຕົນເອງ.

- ຈິດໃຈຂອງທ່ານ ປຽບເໝືອນໂຮງງານຄວາມຄິດ, ຄວາມຄິດຂອງຄົນອື່ນກໍປຽບເໝືອນວັດຖຸດິບສຳລັບປ້ອນໂຮງງານຂອງທ່ານ.

- ໃນສັງຄົມໜຶ່ງຈະມີທັງຄົນດີ ແລະ ຄົນບໍ່ດີ, ບໍ່ມີໃຜຈະເຮັດໃຫ້ທຸກຄົນເປັນຄົນດີໄດ້ໝົດ, ດັ່ງນັ້ນ, ການເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ຈຶ່ງບໍ່ແມ່ນການເຮັດໃຫ້ທຸກຄົນເປັນຄົນດີ ແຕ່ສົ່ງເສີມໃຫ້ຄົນດີເປັນຜູ້ນຳ.

- ຄວາມເປັນຜູ້ນຳ ບໍ່ແມ່ນເປັນມາແຕ່ກຳເນີດ ແຕ່ໄດ້ມາຈາກການຝຶກຝົນ.

ຈະເຮັດທຸລະກິດການງານໃດກໍ່ຕາມ, ຢ່າໄດ້ຮັບເອົາເພື່ອນ ລູກຫລານຂອງເພື່ອນ, ລູກຫລານຂອງລູກຄ້າ ຫລື ແມ່ນແຕ່ ລູກຂອງຕົນເອງມາຮ່ວມເຮັດວຽກນຳ.

---

- ຮ່າງກາຍຂອງແຕ່ລະຄົນຍັງບໍ່ຄືກັນ ແລ້ວຈະໃຫ້ທຸກຄົນມີ ຄວາມຄິດຄືກັນທຸກຢ່າງໄດ້ແນວໃດ. ມີແຕ່ເຄົາລົບໃນຄວາມແຕກຕ່າງຂອງກັນ ແລະ ກັນເທົ່ານັ້ນ ຈຶ່ງຈະເຮັດໃຫ້ຄົນເຮົາຢູ່ຮ່ວມກັນຢ່າງສັນຕິສຸກໄດ້.

- ທຸກຄົນ ຈະມີແນວຄືກັນເຖິງ 90%, ຈະຕ່າງກັນພຽງ 10%, ແຕ່ໃນເວລາຕຳນິຜູ້ອື່ນ ພວກເຮົາຊໍ້າພັດລືມ 90% ທີ່ຄືກັນ,ແຕ່ຈະຈື່ 10% ທີ່ຕ່າງກັນໄດ້ດີກວ່າ.

- ຖ້າຢາກສຳເລັດ, ຈົ່ງຊອກຫາຄຳແນະນຳຈາກຜູ້ທີ່ປະສົບຄວາມສຳເລັດ. ຖ້າຢາກຫລົ້ມຈົມ, ຈົ່ງຊອກຫາຄຳແນະນຳຈາກຜູ້ທີ່ບໍ່ເຄີຍເຮັດຫຍັງສຳເລັດມາກ່ອນ.

- ຄວາມຈິງ ເປັນສິ່ງທີ່ບໍ່ຕາຍ ຄວາມຈິງຍ່ອມເປັນຄວາມຈິງຕະຫລອດໄປ, ແຕ່ຄົນທີ່ເວົ້າຄວາມຈິງ ມັກຈະຕາຍກ່ອນທີ່ຄວາມຈິງຈະປາກົດສະເໝີ ເພາະຜູ້ມີອຳນາດ ສາມາດເຮັດໃຫ້ຄົນທີ່ເວົ້າຄວາມຈິງຕາຍ ແລະ ເຮັດໃຫ້ຜູ້ທີ່ເວົ້າຄວາມບໍ່ຈິງມີຊີວິດຢູ່ໄດ້.

- ຂ້າພະເຈົ້າມີຄົນຮັບໃຊ້ທີ່ຊື່ສັດຢູ່ 6 ຄົນຄື: ໃຜ?,ເຮັດຫຍັງ?,ຢູ່ໃສ?, ເຮັດເມື່ອໃດ? ເຮັດແນວໃດ?, ເປັນຫຍັງຈຶ່ງເຮັດ?. ທັງ 6 ຄົນນີ້ຈະບອກທຸກຢ່າງແກ່ຂ້າພະເຈົ້າ.

- ເກີດມາບໍ່ໄດ້ຮັບການສຶກສາ ແໜງບໍ່ເກີດມາເສຍດີກວ່າ ເພາະຄວາມໂງ່ (ທີ່ບໍ່ໄດ້ຮັບການສຶກສາ) ຄືຮາກເຫງົ້າຂອງໂຊກຮ້າຍທັງປວງ.

- ຈະເປັນຊາວນາຫລືມະຫາກະສັດກໍຕາມ, ຄວາມສຸກອັນແທ້ຈິງຂອງພວກເພິ່ນ ສາມາດຫາໄດ້ຢູ່ທີ່ບ້ານເຮືອນຂອງພວກເພິ່ນນັ້ນເອງ.

- ຢາກຮູ້ຄວາມສາມາດຂອງຜູ້ນໍາ ຕ້ອງເບິ່ງຈາກບັນຫາທີ່ເຂົາແກ້ ເພາະຄົນເຮົາມັກຈະແກ້ບັນຫາຕາມຂະໜາດຂອງຕົນສະເໝີ. ບັນຫາທີ່ໃຫຍ່ກວ່າ ຫຼື ນ້ອຍກວ່າ ຈະຖືກປະຕິເສດຫຼືປ່ອຍໃຫ້ຄົນອື່ນແກ້.

- ຖ້າດຸໝັ່ນຂະຫຍັນພຽນ,ທ່ານຈະປະສົບຄວາມສໍາເລັດ.ແຕ່ທ່ານຈະປະສົບຄວາມສໍາເລັດໃຫຍ່ກວ່ານັ້ນອີກ ຖ້າທັງດຸໝັ່ນ ແລະໃຊ້ຫົວ/ສິລະປະນໍາອີກ.

- ວາງແຜນສໍາລັບປີນຶ່ງ ໃຫ້ປູກສາລີ,ວາງແຜນສາມປີ ປູກຕົ້ນໄມ້ໃຫ້ໝາກ, ແຕ່ຖ້າຈະວາງແຜນສໍາລັບສິບປີ ຈົ່ງປູກຄົນ.

- ຜູ້ນໍາ ຄືຜູ້ທີ່ກ້າເຮັດໃນສິ່ງທີ່ຄົນອື່ນບໍ່ກ້າ ສາມາດແນມເຫັນໃນສິ່ງທີ່ຄົນອື່ນບໍ່ເຫັນ.

- ເພັດທີ່ງົດງາມຈະມີປະໂຫຍດໄດ້ກໍຕໍ່ເມື່ອມີຜູ້ນໍາມາໃຊ້ເປັນເຄື່ອງປະດັບຖ້າຝັງໄວ້ຢູ່ໃນດິນກໍບໍ່ມີປະໂຫຍດອັນໃດ ເຊັ່ນດຽວກັບຄົນທີ່ມີຄວາມຮູ້ ຖ້າບໍ່ນໍາອອກມາໃຊ້ ກໍເໝືອນກັນກັບເພັດທີ່ຝັງຢູ່ໃນດິນ.

- ຄົນເຮົາຕ້ອງເຮັດວຽກຮ່ວມກັນດ້ວຍຈິດໃຈທີ່ວ່າ ອັນໃດຖືກອັນໃດຜິດ?, ບໍ່ແມ່ນໃຜຖືກໃຜຜິດ?.

24/VII
ຫ້າມຈໍາໜ່າຍ

ສັດຜິດກັນ ຈະກັດກັນ, ຄົນຜິດກັນ ຈະກັດກັນຄືກັບສັດ ຫລື ຈະໃຊ້ສະໝອງຄືກັບຄົນ?.

---

- ການໃຫ້ຈະມີຜົນສອງຢ່າງຄື: ໄດ້ຄວາມຮັກ ແລະ ໄດ້ຂອງຕອບແທນຈາກຜູ້ຮັບ.

- ອາຍຸທີ່ຍືນຍາວ ຈະມີປະໂຫຍດອັນໃດ ຖ້າຄວາມຍືນຍາວນັ້ນຫາກ ຍາວໄປກັບສຸຂະພາບທີ່ເຊື່ອມໂຊມ.

- ເຮັດສິ່ງຄານຈະມີທັງແຜນຫລັກ ແລະ ແຜນລອງ, ຖ້າແຜນຫລັກໃຊ້ບໍ່ໄດ້ ກໍນຳໃຊ້ແຜນລອງ. ການສ້າງແຜນທຸກຢ່າງກໍເຊັ່ນດຽວກັນ.

- ຍາມມີທຸກ ຈົ່ງຝືນຍິ້ມ ແລະ ສະແດງອອກທາງກາຍວ່າມີຄວາມສຸກ ແລ້ວຈິດໃຈຂອງທ່ານກໍຈະມີຄວາມສຸກໄປນຳ ເພາະທັງຮ່າງກາຍ ແລະ ຈິດໃຈ ຈະມີຄວາມສຳພັນກັນໂດຍທຳມະຊາດ.

- ເມື່ອພົບຄົນທີ່ທ່ານຍັງບໍ່ຮູ້, ຈົ່ງຍິ້ມມີ ແລະ ບອກຊື່ຂອງທ່ານໃຫ້ແກ່ເຂົາຢ່າງໄວວາ. ຖ້າບໍ່ດັ່ງນັ້ນ, ທ່ານຈະເສຍໂອກາດສະແດງມາລະຍາດຄວາມເປັນຜູ້ດີໄດ້ບໍ່ທັນເຂົາ.

- ເຄື່ອງໝາຍຊີ້ບອກເຖິງບຸລຸດຜູ້ຊີງກຽດທີ່ແທ້ຈິງກໍຄື ແມ່ນແຕ່ສັດຕູຂອງເຂົາກໍຍັງຍອມຍ້ອງຍໍຊົມເຊີຍເຂົາ.

- ການສ້າງແຜນທຸກຢ່າງ ຈະຕ້ອງໃຫ້ສອດຄ່ອງກັບຊັບພະຍາກອນ (ເງິນ, ຄົນ, ວັດຖຸ, ເວລາ, ຂໍ້ມູນຂ່າວສານ ແລະ ຄວາມສາມາດໃນການບໍລິຫານງານ) ທີ່ເຮົາມີສະເໝີ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ